**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການກະຊວງ ເລກທີ 1033 /ຫກຊ.ອຄທ

ນະຄອນຫຼວງວຽງຈັນ, ວັນທີ 01 ຕຸລາ 2021

# ແຈ້ງການ

**ຮຽນ:**
- ທ່ານຫົວໜ້າຫ້ອງການ ບັນດາກະຊວງ/ອົງການທຽບເທົ່າ, ຫ້ອງການປົກຄອງແຂວງ/ນະຄອນຫຼວງ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
- ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ;
- ບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ;
- ຜູ້ໃຊ້ບໍລິການເລກໝາຍໂທລະສັບ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ຂະຫຍາຍເວລາ ການຂຶ້ນທະບຽນ ແລະ ການປິດ ເລກໝາຍໂທລະສັບ**

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, ສະບັບເລກທີ 366/ຫລບ, ລົງວັນທີ 6 ກັນຍາ 2011;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ, ສະບັບເລກທີ 903/ປທສ, ລົງວັນທີ 30 ມີນາ 2020;
- ອີງຕາມ ແຈ້ງການ ຫ້ອງການກະຊວງ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 2209/ຫກຊ.ອຄທ, ລົງວັນ 17 ພະຈິກ 2020 ແລະ ສະບັບເລກທີ 198/ຫກຊ.ອຄທ, ລົງວັນ 28 ພຶດສະພາ 2021;
- ອີງຕາມ ການເຫັນດີຂອງຄະນະນຳ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ຫ້ອງການ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນກຽດແຈ້ງມາຍັງທ່ານຊາບວ່າ ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ ໂຄວິດ-19 (COVID-19) ຮອບໃໝ່ ໄດ້ສ້າງຜົນກະທົບຕໍ່ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນເລກໝາຍໂທລະສັບ ເຮັດໃຫ້ປະຊາຊົນບໍ່ສາມາດມາຂຶ້ນທະບຽນ ຢູ່ຕາມໜ່ວຍບໍລິການຕ່າງໆທີ່ກຳນົດໄວ້. ດ້ວຍຄວາມຈຳເປັນດັ່ງກ່າວ, ຈຶ່ງໄດ້ຂະຫຍາຍເວລາ ການຂຶ້ນທະບຽນ ແລະ ການປິດ ເລກໝາຍໂທລະສັບ ດັ່ງລາຍລະອຽດລຸ່ມນີ້:

**1. ໄລຍະໃນການຂະຫຍາຍເວລາ ການຂຶ້ນທະບຽນ ແລະ ການປິດ ເລກໝາຍໂທລະສັບ ແບ່ງເປັນ 3 ໄລຍະ ຄື:**

**ໄລຍະທີ 1**: ວັນທີ 1 ຕຸລາ 2021 ເຖິງ 31 ມີນາ 2022

- ໃຫ້ສຳເລັດ ການຂຶ້ນທະບຽນເລກໝາຍໂທລະສັບ ທັງເລກໝາຍ ທີ່ເປີດນຳໃຊ້ໃນປະຈຸບັນ ແລະ ເລກໝາຍທີ່ຍັງບໍ່ທັນເປີດນຳໃຊ້ທຸກລະບົບ, ພ້ອມທັງຮັບປະກັນເລກໝາຍໂທລະສັບທີ່ປະຊາຊົນນຳໃຊ້ຢູ່ໃນລະບົບ ສາມາດນຳໃຊ້ໄດ້ປົກກະຕິ.



ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ອົງການດັດສົມໂທລະຄົມມະນາຄົມ, ຖະໜົນ ລາວ-ໄທ 01005, ບ້ານ ວັດນາກ, ເມືອງສີສັດຕະນາກ,
ນະຄອນຫລວງວຽງຈັນ, ສປປ ລາວ, ໂທ: (+856-21) 316560, ແຟັກ: (+856-21) 480259

**ໄລຍະທີ 2**: ວັນທີ 01 ເມສາ ເຖິງ 31 ພຶດສະພາ 2022

- ໃຫ້ດຳເນີນການ **ປິດຊົ່ວຄາວ ການໂທຂາອອກ ແລະ ນຳໃຊ້ອິນເຕີເນັດ** ຂອງເລກໝາຍໂທລະສັບທີ່ເປີດນຳໃຊ້ໃນປະຈຸບັນທີ່ບໍ່ຂຶ້ນທະບຽນ ຜ່ານລະບົບເຕັກນິກຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ, ພ້ອມທັງຮັບປະກັນ ການໂທອອກ ແລະ ການຮັບ-ສົ່ງຂໍ້ຄວາມ (SMS) ຫາ ເບີສຸກເສີນໄດ້ເທົ່ານັ້ນ, ຮັກສາຈຳນວນ ມູນຄ່າໂທ ແລະ ດາຕ້າ ທີ່ຍັງເຫຼືອໃນລະບົບ ຈົນກວ່າ ເຈົ້າຂອງເລກໝາຍໂທລະສັບ ມາຂຶ້ນທະບຽນຢ່າງຖືກຕ້ອງ ຈຶ່ງສາມາດນຳໃຊ້ໄດ້ປົກກະຕິ.

**ໄລຍະທີ 3**: ວັນທີ 01 ມິຖຸນາ ເຖິງ 31 ກໍລະກົດ 2022

- ໃຫ້ດຳເນີນການ **ປິດຖາວອນ ການໂທຂາເຂົ້າ-ຂາອອກ, ສັນຍານອິນເຕີເນັດ ແລະ ສົ່ງຂໍ້ຄວາມ (SMS)** ຂອງເລກໝາຍໂທລະສັບທີ່ເປີດນຳໃຊ້ປະຈຸບັນ ທີ່ຍັງບໍ່ທັນຂຶ້ນທະບຽນ, ພ້ອມຮັບປະກັນ ສາມາດໂທອອກຫາເບີສຸກເສີນໄດ້ ເທົ່ານັ້ນ ແລະ ສາມາດຂໍເປີດນຳໃຊ້ ເລກໝາຍໂທລະສັບຂອງຕົນຄືນໄດ້ ໃນໄລຍະນີ້ເທົ່ານັ້ນ, ແຕ່ຜູ້ໃຊ້ບໍລິການ ຕ້ອງມາຂຶ້ນທະບຽນເລກໝາຍໂທລະສັບຂອງຕົນໃຫ້ຖືກຕ້ອງຕາມຂັ້ນຕອນທີ່ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ກຳນົດ.

**2.** ໃຫ້ ບໍລິສັດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ພ້ອມກັບຕົວແທນຈຳໜ່າຍ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຈັດຕັ້ງປະຕິບັດດັ່ງນີ້:

- ເລກໝາຍໂທລະສັບທີ່ເປີດນຳໃຊ້ໃໝ່ ຕ້ອງດຳເນີນການຂຶ້ນທະບຽນ ຜ່ານລະບົບ 3 ແກ້ບ ຫຼື Lao KYC ໃຫ້ສຳເລັດຈຶ່ງສາມາດເປີດນຳໃຊ້ໄດ້, ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01 ຕຸລາ 2021 ເປັນຕົ້ນໄປ;
- ຈັດໂປຣໂມຊັ່ນ **ສຳລັບເບີ 020 ແມ່ນໃຫ້ຟຣີ ດາຕ້າ 1G ແລະ ເບີ 030 ແມ່ນໃຫ້ຟຣີມູນຄ່າໂທທຸກເຄືອຂ່າຍ 30 ນາທີ** ສຳລັບເບີທີ່ຂຶ້ນທະບຽນເລກໝາຍໂທລະສັບ ສຳເລັດ ເລີ່ມແຕ່ວັນທີ 01 ຕຸລາ 2021 ເປັນຕົ້ນໄປ ຫາ ວັນທີ 31 ກໍລະກົດ 2022;
- ການດຳເນີນມາດຕະການປິດເລກໝາຍໂທລະສັບ ໃນໄລຍະທີ 2 ແລະ 3 ແມ່ນໃຫ້ປິດ 25% ຕໍ່ອາທິດ ຂອງຈຳນວນເລກໝາຍໂທລະສັບທີ່ບໍ່ທັນຂຶ້ນທະບຽນ;
- ສຳລັບເລກໝາຍໂທລະສັບທີ່ຜູ້ໃຊ້ບໍລິການບໍ່ມາຂຶ້ນທະບຽນ ແມ່ນສາມາດເປີດເປັນເບີໃໝ່ເພື່ອອອກຂາຍໄດ້ ເລີ່ມແຕ່ວັນທີ 01 ສິງຫາ 2022 ເປັນຕົ້ນໄປ;
- ສືບຕໍ່ປະສານສົມທົບກັບພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ແລະ ການຈັດຕັ້ງຂັ້ນບ້ານ ໃນການຜັນຂະຫຍາຍແຈ້ງການສະບັບນີ້ ເພື່ອຊຸກຍູ້ວຽກງານການຂຶ້ນທະບຽນເລກໝາຍໂທລະສັບໃຫ້ສຳເລັດຕາມລະດັບຄາດໝາຍ.

**3.** ຂໍຄວາມຮ່ວມມືມາຍັງ ບັນດາກະຊວງ, ອົງການ/ທຽບເທົ່າ, ປກສ, ປກຊ, ອົງການຈັດຕັ້ງທັງ ພາຍໃນ ແລະ ຕ່າງປະເທດ, ບັນດາແຂວງ/ນະຄອນຫຼວງ, ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ສືບຕໍ່ຊຸກຍູ້ສົ່ງເສີມ ໃນການເຜີຍແຜ່, ປຸກລະດົມ ແລະ ຂົນຂວາຍ ຜູ້ໃຊ້ບໍລິການເລກໝາຍໂທລະສັບ ທີ່ເປັນພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນຮູ້, ນັກສຶກສາ, ພໍ່ແມ່ປະຊາຊົນ ແລະ ຊາວຕ່າງປະເທດ ທີ່ອາໃສຢູ່ໃນ ສປປ ລາວ ແລະ ຕ່າງປະເທດ ມາຂຶ້ນທະບຽນເລກໝາຍໂທລະສັບ ຢ່າງເປັນຂະບວນຟົດຟື້ນ ແລະ ຕໍ່ເນື່ອງ.



ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ອົງການດັດສົມໂທລະຄົມມະນາຄົມ, ຖະໜົນ ລາວ-ໄທ 01005, ບ້ານ ວັດນາກ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ, ໂທ: (+856-21) 316560, ແຟັກ: (+856-21) 480259

ແຈ້ງການສະບັບນີ້ ໃຊ້ປ່ຽນແທນ ແຈ້ງການ ສະບັບເລກທີ 197/ທກຊ.ອດທ, ລົງວັນທີ 28 ພຶດສະພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຮ.ກ. ຫົວໜ້າຫ້ອງການ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

**ອະລະໄຊ ດາລາລອຍ**



ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ອົງການດັດສົມໂທລະຄົມມະນາຄົມ, ຖະໜົນ ລາວ-ໄທ 01005, ບ້ານ ວັດນາກ, ເມືອງສີສັດຕະນາກ,
ນະຄອນຫລວງວຽງຈັນ, ສປປ ລາວ, ໂທ: (+856-21) 316560, ແຟັກ: (+856-21) 480259